**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 30 ພຶສພາ 2010 (05-30-2010)**

# ເວລາຜູ້ນຳຜິດພາດ

**<u>ຂໍ້ພຣະຄັມພີໃນບົດຮຽນ</u>:** (1 ຊາມູເອນ 2:22-25; 3:11-21)

**<u>ເປົ້າໝາຍຂອງບົດຮຽນ:</u>**

ລູກຊາຍຂອງທ່ານເອລີເປັນປະໂຣຫິດທີ່ຊົ່ວຊ້າໄດ້ທຳໃຫ້ພຣະເຈົ້າເສັຽພຣະທັຍ. ພຣະເຈົ້າໄດ້ສຳແດງໃຫ້ເຫັນວ່າພຣະອົງຍັງມີອຳນາດປົກຄອງຢູ່ດ້ວຍການທີ່ນຳເອົາຜູ້ປະກາດພຣະທັມທີ່ສັດຊື່ຂຶ້ນມາແທນທີ່ພວກເຂົາ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ສິ່ງທີ່ເຮົາທຳແລະວິທີເຮົາທຳເພື່ອພຣະເຈົ້ານັ້ນມີປໂຍດ, ຖ້າພວກເຮົາລົ້ມເຫຼວຕໍ່ການທີ່ພຣະເຈົ້າໄດ້ມອບ ຄວາມໄວ້ວາງໃຈອັນສັກສິດຂອງພຣະອົງໃຫ້ແກ່ພວກເຮົານັ້ນ, ພຣະອົງກໍຈະຊອກຫາຜູ້ຮັບໃຊ້ຄົນອື່ນທີ່ຊື່ສັດນັ້ນເຮັດ ວຽກຕາມນໍ້າພຣະທັຍຂອງພຣະອົງແທນເຮົາ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ຈະຊ່ວຍໜູນໃຈທ່ານຮັບໃຊ້ພຣະເຈົ້າຢ່າງສັດຊື່ໃນຖ້າມກາງຄົນອື່ນໆກະທຳສິ່ງຕ່າງໆຢູ່ຮອບຂ້າງຕົວທ່ານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ພຣະເຈົ້າຍັງຄຸ້ມຄອງຢູ່ບໍ່?
- ທ່ານຍັງຖາມຄຳຖາມນີ້ຢູ່ບໍ່?
- ຄຳຖາມຂອງທ່ານໄດ້ນຳທ່ານໄປເຖິງຄວາມເຊື່ອໃນພຣະເຈົ້າບໍ່?
- ເປັນຫຍັງຈຶ່ງວ່າບົດຮຽນນີ້ມີຄວາມສຳຄັນຫລາຍ?

1. **ຄວາມໄວ້ວາງໃຈອັນສັກສິດຖືກທຳລາຍ:** (1 ຊາມູເອນ 2:22-25)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 2:22-25
- ນຳພານັກຮຽນສົນທະນາເຖິງຜົນຮັບຂອງສັງຄົມ ໃນເມື່ອຜູ້ໃດຜູ້ນຶ່ງຢູ່ໃນຕຳແໜ່ງໜ້າທີ່ບໍ່ເປັນແບບຢ່າງໃນພາຣະໜ້າທີ່ ກັບບໍ່ສັດຊື່ ແລະບໍ່ຍຶດຖືຫລັກສິນທັມ:
- ທ່ານຈະເອົາຄວາມເຊື່ອໄວ້ວາງໃຈປະເພດໃດມາໃຫ້ປະຊາກອນເຫລົ່ານີ້ ໃຫ້ເປັນຜູ້ຮັບໃຊ້ໄດ້?
- ໃຫ້ນັກຮຽນສລຸບສັ້ນໆ ເຣື່ອງລູກຊາຍຂອງເອລີ ຊຶ່ງບັນທຶກຢູ່ໃນພຣະທັມ 1 ຊາມູເອນ 2:12-22 (ຊຶ່ງບໍ່ສົນໃຈນຳພຣະເຈົ້າ ຫລືການຖືກແຕ່ງຕັ້ງເລີຍ; ການເກັບຮັກສາພິເສດແລະສ່ວນແບ່ງໃນການຖວາຍບູຊາຊີ້ນ; ການເອົາຊີ້ນອອກກ່ອນແລ້ວຈຶ່ງເຜົານ້ຳມັນ ເປັນການເຜົາໄຟຖິ້ມລ້າໆ; ເປັນການດີສຳລັບເຂົາເຈົ້າ; ການຖວາຍດູຖູກພຣະເຈົ້າ; ການນອນນຳຜູ້ຍິງ ການຮັບໃຊ້ຢູ່ໃນພຣະວິຫານ ເຫລົ່ານີ້ເປັນຕົ້ນ)
- ຄວາມບາບເຫລົ່ານີ້ ແມ່ນຄວາມບາບອັນໃດທີ່ເຮັດໃຫ້ຄົນທັງຫລາຍທຳຜິດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 2:22-25)

1. ເປັນດ້ວຍເຫດໃດຊົນຊາດອິສຣາເອນຈຶ່ງໂຄຣົບນັບຖື ເຊື່ອຟັງລູກຊາຍເອລີ? ພວກເຮົາຄວນໂຄຣົບນັບຖືເຊື່ອໄວ້ວາງໃຈໃນຜູ້ໃດ?
2. ໃນເມື່ອລູກຊາຍລາວໄດ້ຫັນໜີຈາກທາງຂອງພຣະເຈົ້າແລ້ວ ເອລີເຮັດແນວໃດ?
3. ທ່ານຈະເຮັດແນວໃດຕໍ່ບັນຫາເຫລົ່ານີ້?
4. ພວກເຮົາຄວນຈະເຮັດແນວໃດໃນເມື່ອພວກເຮົາຫາກໄດ້ຝ່າຝືນໂດຍການລ່ວງລະເມີດ ແລະບໍ່ມີໃຜເຊື່ອໄວ້ວາງໃຈໃນພວກເຮົາ?

2. **ພຣະເຈົ້າຈະເຮັດສິ່ງທີ່ພຣະອົງຄິດວ່າດີ:** (1 ຊາມູເອນ 3:11-18)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ 1 ຊາມູເອນ 3:11-18
- ຂ່າວການກະທຳຊົ່ວທີ່ໄດ້ຍິນມາຕລອດ, ເຊັ່ນ ການເສັງກຸງດສັກສີ, ການຫລິ້ນຊູ້ ແລະອື່ນໆ...
- ເປັນເພາະເຫດໃດພວກເຮົາຈຶ່ງມີຄວາມສົນໃຈໃນເຣື່ອງຂ່າວຮ້າຍທີ່ເກີດຂຶ້ນກັບຄົນທີ່ເຮົາຮັກ? ຊຶ່ງມັນກໍເປັນສິ່ງທີ່ພວກເຮົາບໍ່ຢາກພົບ ບໍ່ຢາກໄດ້ຍິນ ແລະບໍ່ຢາກເຫັນຂ່າວປະເພດນີ້ແມ່ນບໍ່? ຈະລົບລ້າງການທີ່ໄດ້ປະສົບພົບພໍ້ຂ່າວເຫລົ່ານີ້ອອກໄປຈາກຄວາມຄິດຂອງພວກເຮົາໄດ້ຢ່າງໃດ?
- ໃຫ້ສ້າງຫລາຍເຣື່ອງທີ່ແຕກຕ່າງກັນຂຶ້ນມາ ເພື່ອໃຫ້ນັກຮຽນແຕ່ລະຄົນເລືອກເອົາມາເປັນຂ່າວທີ່ໜ້າສົນໃຈຂຶ້ນມາເປັນຕົວຢ່າງທີ່ຈະຕ້ອງກະທຳການແກ້ໄຂແບບໃດ. (ຕົວຢ່າງ, ລູກຊາຍທີ່ກຳລັງເປັນທີນເອເຈີ( ວັຍລຸ້ນຂຶ້ນໃໝ່) ຂອງທ່ານມາບອກກັບທ່ານວ່າ ລູກສາວເພື່ອນຂອງທ່ານໄດ້ກິນເຫລົ້າເມົາ ແລະໃຊ້ຢາເສບຕິດໄປໃນທາງທີ່ຜິດຊຶ່ງຜູ້ເປັນແມ່ບໍ່ໄດ້ຮູ້ຫຍັງເລີຍ.) ແລ້ວນຳພານັກຮຽນສົນທະນາວ່າຈະຊ່ອຍເຂົາແນວໃດ, ພຣະເຈົ້າເປັນຜູ້ຕັດສິນເອລີຊຶ່ງເປັນການສ້າງຄວາມຫຍຸ້ງຍາກໃຫ້ແກ່ຊາມູເອນ.
- ໃນເວລາທີ່ພຣະເຈົ້າປ່ອຍໃຫ້ທ່ານມີຄວາມທຸກທໍຣະມານ ທ່ານເຄີຍໄດ້ຂອບຄຸນພຣະເຈົ້າຈັກເທື່ອບໍ່?
- ທ່ານຈະສຳນຶກເຖິງການທີ່ພຣະເຈົ້າໄດ້ກຳນົດໄວ້ແນວໃດ?
- ບາງຄັ້ງ ສິ່ງໃດທີ່ພຣະເຈົ້າຄິດວ່າດີນັ້ນບໍ່ເໝືອນກັບສິ່ງທີ່ເຮົາຄິດວ່າດີ. ພຣະເຈົ້າບໍ່ໄດ້ທຳການໃດໆກັບໃນທາງດຽວທຸກຄັ້ງ. ຊັ່ງຊາປຽບທຽບສິ່ງນີ້ກັບພຣະທັມເອຊາຢາ 55:8. ແລ້ວໃຫ້ສົນທະນາເຫດຜົນທີ່ມີຄວາມແຕກຕ່າງກັນວ່າ ເປັນຫຍັງຄວາມຄິດທັດສະນະຂອງພຣະເຈົ້າຈຶ່ງດີ ແລະແຕກຕ່າງກັບຄວາມຄິດທັດສະນະຂອງພວກເຮົາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (1 ຊາມູເອນ 3:11-18)

1. ຫລັງຈາກການໄດ້ຍິນເຖິງແຜນການຂອງພຣະເຈົ້າແລ້ວ ເອລີກໍນຳມາຫາຊາມູເອນ ນັ້ນແມ່ນຫຍັງທີ່ເປັນທັດສະນະນິສັຍຂອງເອລີ?
2. ມີທາງອື່ນບໍ່ທີ່ເອລີຈະຕ້ອງຕອບສນອງ? ເປັນຫຍັງພວກເຮົາບາງເທື່ອຈຶ່ງມີຄວາມຝືນໃຈໃນການປະເຊີນໜ້າກັບຄົນອື່ນ?
3. ໃນທາງໃດທີ່ທ່ານສາມາດເລົ່າເຣື່ອງນີ້ໃຫ້ກັບພໍ່ແມ່ແກ້ໄຂໃນການບໍ່ຟັງຄວາມຂອງລູກໆ?
4. ທ່ານເອລີໄດ້ຮຽກຮ້ອງຊາມູເອນວ່າ ລູກຊາຍໃນ ຂໍ້ທີ 16 ເອລີໄດ້ຕອບສນອງຂ່າວຂອງຊາມູເອນແນວໃດ?

## 3 . ພຣະເຈົ້າຍັງດຳເນີນປະກາດພຣະຄຳຂອງພຣະອົງ : (1 ຊາມູເອນ 3:19-21)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ກິຈການ 1 ຊາມູເອນ 3:19-21
- ພຣະເຈົ້າຊົງເລີ້ມປະກາດຢືນຢັນໃຫ້ຊາມູເອນໃນຖານະເປັນຜູ້ເຜີຍແຜ່ພຣະວັຈນະຂອງພຣະອົງແທນເອລີ. ການປ່ຽນແປງຜູ້ນຳ, ໂດຍສະເພາະໃນຄຣິສຕະຈັກ, ຊຶ່ງບໍ່ແມ່ນການບົ່ງບອກວ່າພຣະເຈົ້າໝົດບັນຫາ.ພຣະເຈົ້າຍັງຈະຈັດຫາຜູ້ນຳຄົນໃໝ່ຂຶ້ນມາອີກ
- ສົນທະນາກັນວ່າ ພຣະເຈົ້າປ່ຽນຜູ້ນຳໃໝ່ແນວໃດ, ແຕ່ພຣະອົງເອງບໍ່ມີການປ່ຽນແປງເລີຍ ໝາຍຄວາມວ່າແນວໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** 1 ຊາມູເອນ 3:19-21

1. ການທີ່ຊາມູເອນເຕີບໂຕຂຶ້ນເໝືອນພຣະເຢຊູໃນພຣະທັມ ລູກາ 2:52 ທ່ານຄິດວ່າແນວໃດ?
2. ທ່ານໄດ້ເອົາພາກສ່ວນໃດໃນການສືບຕໍ່ໃຫ້ຈະເຣີນຂຶ້ນໃນດ້ານສະຕິປັນຍາ ແລະໃນການຊື່ນຊົມກັບພຣະເຈົ້າ ແລະກັບຄົນທັງຫລາຍ?
3. ພວກເຮົາຈະເອົາຕາມແບບຢ່າງຂອງຊາມູເອນໄດ້ແນວໃດ?

## ພຣະຄັມພີແຫ່ງຄວາມຈິງ

- ພຣະເຈົ້າຢາກໃຫ້ໄພ່ພົນຂອງພຣະອົງຮັບໃຊ້ພຣະອົງດ້ວຍຄວາມເຊື່ອຢ່າງແທ້ຈິງ, ນັບຖືຢ່າງຈິງໃຈ, ແລະຢ່າງໜ້າໂຄຣົບນັບຖື.
- ເໝືອນຜູ້ນຳຂອງພວກເຮົາທຸກຄົນ, ໜີບໍ່ພົ້ນຈາກການທົດລອງ ຫລອກລວງ ແລະຕົກຢູ່ໃນຄວາມຜິດບາບ. ເຂົາເຈົ້າຕ້ອງການ ການອ້ອນວອນອະທິຖານຫລາຍໆ ພວກເຮົາຕ້ອງການທີ່ຈະອະທິຖານເພື່ອຄົນອື່ນໆດ້ວຍເຊັ່ນດຽວກັນ.
- ຖ້າຫາກພວກເຮົາເຊົາຮັບໃຊ້ພຣະອົງ. ພຣະເຈົ້າຈະຊອກເອົາຜູ້ຮັບໃຊ້ທີ່ມີຄວາມເຊື່ອເຂັ້ມແຂງ ໃຫ້ນຳເອົາພຣະປະສົງຂອງພຣະອົງອອກໄປປະກາດ. ຄົນອາດຈະເຫັນພວກເຮົາຕ່ຳ, ແຕ່ວ່າພຣະເຈົ້າກໍຈະຍັງຄຸ້ມຄອງ. ຄວາມເຊື່ອໝັ້ນຂອງພວກເຮົາຍັງຢູ່ໃນພຣະອົງສເມີ ແລະພວກເຮົາຕ້ອງຟັງຄວາມພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH